Glencoe REGIONAL HEALTH

# ສະຫຼຸບນະໂຍບາຍຄວາມຊ່ວຍເຫຼືອທາງການເງິນເປັນພາສາທີ່ເຂົ້າໃຈງ່າຍ

Glencoe Regional Health (GRH)
ສະເໜີນະໂຍບາຍຄວາມຊ່ວຍເຫຼືອທາງການເງິນໃຫ້ແກ່ຄົນເຈັບທີ່ມີຄຸນສົມບັດກົງຕາມຂໍ້ກຳນົດໃນການມີສິດໄດ້ຮັບຄວາມຊ່ວຍເຫຼືອ. ໃນປັດຈຸບັນທາງ GRH ສະເໜີໂປແກມໃຫ້ສ່ວນຫຼຸດສອງ ໂປແກມ ໄດ້ແກ່ ການດູແລຮັກສາທີ່ບໍ່ມີປະກັນຄຸ້ມຄອງ (Uninsured Care) ແລະ ການດູແລຮັກສາທີ່ບໍ່ໄດ້ຮັບເງິນ ຊົດເຊີຍ (Uncompensated Care). ຖ້າຜູ້ຄ້ຳປະກັນ/ຄົນເຈັບມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫຼືອໃນໂປແກມໃດໜຶ່ງ ສ່ວນຫຼຸດນີ້ຈະມີຜົນບັງຄັບໃຊ້ຕະຫຼອດທັງປີປະຕິທິນ.

ການດູແລຮັກສາທີ່ບໍ່ມີປະກັນຄຸ້ມຄອງ ເຊິ່ງເອີ້ນອີກຢ່າງໜຶ່ງວ່າສ່ວນຫຼຸດຂອງໄອຍະການສູງສຸດ ຫຼື ສ່ວນຫຼຸດຕາມລັດຖະບັນຍັດຂອງລັດ ຈະນຳໃຊ້ໄດ້ຖ້າລາຍໄດ້ຕໍ່ປີຂອງຄອບຄົວຜູ້ຄ້ຳປະກັນ/ຄົນເຈັບຕ່ຳກວ່າ 125,000.00 ໂດລາ ແລະບໍ່ມີປະກັນສຸຂະພາບຄຸ້ມຄອງທີ່ໃຊ້ໄດ້ຢູ່. ສ່ວນຫຼຸດແມ່ນ 41% ຂອງຄ່າໃຊ້ຈ່າຍທັງໝົດທີ່ຮຽກເກັບ. ຕ້ອງໃຊ້ ໃບສະໝັກແລະໜ້າທີໜຶ່ງຂອງແບບຟອມລາຍງານອິນຄຳແທັກ IRS 1040 ຂອງປີທີ່ຜ່ານມາຂອງເຂົາເຈົ້າໃນ ການສະໝັກ.

ການດູແລຮັກສາທີ່ບໍ່ໄດ້ຮັບເງິນຊົດເຊີຍແມ່ນສ່ວນຫຼຸດໂດຍອີງໃສ່ລາຍໄດ້ຂອງແຕ່ລະບຸຄຄົນ. ຜູ້ຄ້ຳປະກັນ/ຄົນເຈັບຈະໄດ້ຮັບການດູແລຮັກສາຟຣີ ຖ້າລາຍໄດ້ຂອງເຂົາເຈົ້າສູງເຖິງ 4 ເທົ່າຂອງລະດັບຄວາມຍາກຈົນຂອງລັດຖະບານກາງ. ຖ້າລາຍໄດ້ຂອງເຂົາເຈົ້າຢູ່ລະຫວ່າງສອງເທົ່າເຖິງສີ່ເທົ່າຂອງລະດັບຄວາມຍາກຈົນຂອງລັດຖະບານກາງ ຄ່າດູແລຮັກສາຈະໄດ້ຮັບສ່ວນຫຼຸດ 50%.
ຜູ້ຄ້ຳປະກັນ/ຄົນເຈັບຈະໄດ້ຮັບການພິຈາລະນາໃຫ້ມີສິດໄດ້ຮັບການດູແລຮັກສາທີ່ບໍ່ໄດ້ຮັບເງິນຊົດເຊີຍໄດ້ ໂດຍຍື່ນໃບສະໝັກທີ່ກອກຄົບຖ້ວນ, ໜ້າທີໜຶ່ງຂອງແບບຟອມລາຍງານອິນຄຳແທັກ IRS 1040 ຂອງປີທີ່ຜ່ານມາຂອງເຂົາເຈົ້າ ແລະຫຼັກຖານຢັ້ງຢືນການສະໝັກແລະການປະຕິເສດຄວາມຊ່ວຍເຫຼືອທາງການແພດ.
ຜູ້ຄ້ຳປະກັນ/ຄົນເຈັບທີ່ມີສິດໄດ້ຮັບການດູແລຮັກສາທີ່ບໍ່ໄດ້ຮັບເງິນຊົດເຊີຍ ຈະບໍ່ຖືກຮຽກເກັບເງິນເກີນກວ່າຈຳນວນເງິນທີ່ຮຽກເກັບທົ່ວໄປສຳລັບບໍລິການສຸກເສີນ ແລະບໍລິການທາງການແພດອື່ນໆທີ່ຈຳເປັນ.

ສາມາດເບິ່ງສຳເນົານະໂຍບາຍຄວາມຊ່ວຍເຫຼືອທາງການເງິນຂອງ **GRH** ແລະໃບສະໝັກໄດ້ທີ່ເວັບໄຊຂອງພວກເຮົາ https://glencoehealth.org/billing-and-insurance/financial-assistance/ ທີ່ McLeod County Social Services ຫຼືທີ່ໂຕະພະແນກຕ້ອນຮັບຂອງ GRH ທັງໃນໂຮງໝໍແລະຄລີນິກທີ່ 1805 Hennepin Avenue North, Glencoe, MN 55336. ຜູ້ຄ້ຳປະກັນ/ຄົນເຈັບຍັງສາມາດຮ້ອງຂໍໃຫ້ສົ່ງນະໂຍບາຍຄວາມຊ່ວຍເຫຼືອທາງການເງິນ ແລະ/ຫຼື ໃບສະໝັກດັ່ງກ່າວໃຫ້ເຂົາເຈົ້າທາງໄປສະນີໂດຍບໍ່ເສຍຄ່າໄດ້ເຊັ່ນກັນ. ຖ້າມີຂໍ້ສົງໄສກ່ຽວກັບສ່ວນຫຼຸດ ຫຼືໃບສະໝັກເຫຼົ່ານີ້ ສາມາດຕິດຕໍ່ເຈົ້າໜ້າທີ່ສະໜັບສະໜູນຊ່ວຍເຫຼືອທາງການເງິນແກ່ຄົນເຈັບຂອງ GRH (Patient Financial Advocate) ທີ່ເບີ 320-864-7101 ຫຼືດ້ວຍຕົນເອງທີ່ຄລີນິກ Glencoe.